ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການ

ເລກທີ 0720/ຫກ

ນະຄອນຫຼວງວຽງຈັນ, ວັນທີ 24 ກຸມພາ 2026

## ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ກະຊວງການເງິນ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີເງື່ອນໄຂຄົບຖ້ວນ ເຂົ້າຮ່ວມຍື່ນຊອງປະມູນ ການຍົກຍ້າຍ ແລະ ຕິດຕັ້ງອຸປະກອນໄອທີ ຢູ່ຫ້ອງຝຶກອົບຮົມກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ ໄປສະຖາບັນເສດຖະກິດ - ການເງິນ ແລະ ເຊື່ອມຕໍ່ລະບົບ **Network System** ແລະ ລະບົບໄຟຟ້າ ຢູ່ ສະຖາບັນເສດຖະກິດ - ການເງິນ.
2. ການປະມູນແມ່ນຈະດຳເນີນຕາມຂັ້ນຕອນປະມູນເປີດກວ້າງທີ່ໄດ້ກຳນົດໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງ ວັນທີ 13 ກຸມພາ 2019;
3. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆບໍລິສັດ ຂອງນິຕິບຸກຄົນພາຍໃນ ທີ່ດຳເນີນທຸລະກິດຢູ່ ໃນ ສປປ ລາວ, ມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບທະບຽນອາກອນ ປີ 2024 ຖືກຕ້ອງ ຕາມກົດໝາຍ;
4. ການປະມູນນີ້ແມ່ນເປີດກວ້າງໃຫ້ທຸກໆບໍລິສັດ ທີ່ດຳເນີນທຸລະກິດຢູ່ ສປປ ລາວ, ເຊິ່ງມີເງື່ອນໄຂຄົບ ຖ້ວນເຊັ່ນ: ມີໃບທະບຽນວິສາຫະກິດ, ມີເລກປະຈຳຕົວຜູ້ເສຍອາກອນ, ໃບຢັ້ງຢືນການປະຕິບັດພັນທະ ພາສີອາກອນ ຖືກຕ້ອງຕາມກົດໝາຍ;
5. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນເອກະສານຄົບຊຸດໄດ້ທີ່ ພະແນກບໍລິຫານ, ຫ້ອງການ ກະຊວງການເງິນ (ເບີໂທລະສັບ: 020 55553594)ໃນໂມງລັດຖະການ, ນັບແຕ່ວັນທີ 24...ກຸມພາ ເຖິງ ..30.. ມີນາ 2026, ລາຄາຊອງປະມູນ **1**,000,000 ກີບ ແລະ ໃນຈຳນວນເງິນດັ່ງກ່າວນີ້ແມ່ນ ລະບໍ່ມີການສົ່ງຄືນ;
6. ຊອງປະມູນຕ້ອງສົ່ງກ່ອນເວລາ 10:00 ໂມງ,ຂອງວັນທີ 31. ມີນາ 2026 ທີ່ພະແນກບໍລິຫານ ຫ້ອງການ ກະຊວງການເງິນ ແລະ ຊອງປະມູນເປີດກວ້າງຈະໄດ້ເປີດໃນເວລາ 14:00ໂມງ ຂອງວັນທີ 31 ມີນາ 2026 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າ ຮ່ວມ ທີ່ ຫ້ອງປະຊຸມ ຊັ້ນ 04 ກະຊວງການເງິນ;
7. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະມູນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນ ຈາກທະນາຄານ, ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງລາຄາປະມູນມາພ້ອມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ເຫັນດີ

ຫົວໜ້າຫ້ອງການ

ພົງສະຫວັນ ລາດທິຈັກ

สแกนด้วย CamScanner